ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 837 ../ຫກ/

ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2020

## ແຈ້ງທຶນການສຶກສາ

ເຖິງ: ພະນັກງານ, ນັກຮຽນ, ນັກສຶກສາ ຢູ່ ສະຖາບັນຕ່າງໆ.

ເລື່ອງ: ແຈ້ງທຶນການສຶກສາຂອງ Ton Duc Thang University ປະເທດ ສສ.ຫວຽດນາມ ສຳລັບສົກປີ 2019-2020.

- ອີງຕາມ ສຳເນົາໜັງສືຈາກ Ton Duc Thang University ປະເທດ ສສ.ຫວຽດນາມ.
- ອີງຕາມ ຄຳເຫັນຂອງທ່ານຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ລົງວັນທີ 28/2/2020.

ຫ້ອງການກະຊວງສຶກສາທິການ ແລະ ກິລາຂໍແຈ້ງມາຍັງທ່ານມາຍັງທ່ານຊາບວ່າ: Ton Duc Thang University ປະເທດ ສສ.ຫວຽດນາມ ສະເໜີໃຫ້ທຶນການສຶກສາແກ່ ປະເທດ ສປປ ລາວ ສົກຮຽນ 2019 - 2020 ໃນລະດັບປະລິນຍາຕີ ຫຼັກສູດການຮຽນ - ການສອນ ເປັນພາສາ ອັງກິດ ແລະ ພາສາຫວຽດ ພາຍໃຕ້ທຶນການສຶກສາ ຂອງ Ton Duc Thang University ລວມມີ 02 ຫຼັກສູດ ເຊິ່ງມີເງື່ອນໄຂ ແລະ ລາຍລະອຽດດັ່ງນີ້:

I.ຫຼັກສູດພາສາຫວຽດ:

1. ມີທຶນ (100%) ແລະ ທຶນ ( 50% ), ສຳລັບທຶນ 100 % ( ແມ່ນຍົກເວັ້ນ ຄ່າຮຽນ, ຄ່າຫໍພັກ ), ສ່ວນທຶນ 50 % ( ຕ້ອງໄດ້ຈ່າຍເຄິ່ງໜຶ່ງຂອງມູນຄ່າຮຽນທັງໝົດ )

II.ຫຼັກສູດພາສາອັງກິດ:

ຕ້ອງມີໃບຢັ້ງຢືນຈົບພາສາອັງກິດ ຫຼື ມີຄວາມຮູ້ທາງດ້ານພາສາອັງກິດ IELTS 5.0
( ທຶນແມ່ນຍົກເວັ້ນຄ່າຮຽນ, ຄ່າຫໍພັກ )

II.ເງື່ອນໄຂຜູ້ສະໝັກ

- ຕ້ອງເປັນຄົນສັນຊາດລາວມີສຸຂະພາບແຂງແຮງດີ
- ມີໃບປະກາດ ແລະ ໃບຄະແນນຈົບຊັ້ນມັດທະຍົມຕອນປາຍ
- ມີໃບຢັ້ງຢືນຈົບພາສາອັງກິດໃນລະດັບດີ

III.ແບບຟອມສະໝັກ ແລະ ວິທີສະໝັກ

ແບບຟອມສະໝັກ, ວິທີສະໝັກ ແລະ ຂໍ້ມູນລາຍລະອຽດແມ່ນສະໝັກທາງ online ດັ່ງນີ້: https://cis.tdtu.edu.vn/admissions/how-to-apply ຫຼັງຈາກສະໝັກແລ້ວແມ່ນໃຫ້ຖ່າຍຮູບແບບຟອມສະໝັກ ສົ່ງໄປຍັງ WhatsApp: +84 944869244 ຫຼື Email: vohoangca@tdtu.edu.vn.

ຜ່ານມາເຮົາໄດ້ແຈ້ງທຸກໆປີ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ສະໝັກໃຫ້ທັນເວລາດ້ວຍ.

ຮັກສາການຫົວໜ້າຫ້ອງການ

ນ.ດາລາວອນ ກິດຕິພັນ